ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ ແບບຍືນຍົງ (ProFEB)

### ປົກປັກຮັກສາ ປ່າໄມ້ ແລະ ຊີວະນາໆພັນ

## ຄວາມເປັນມາ

ປະເທດລາວ ເປັນໜຶ່ງໃນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນຫຼາຍທີ່ສຸດໃນອາຊີຕາເວັນອອກສຽງໃຕ້ ທີ່ກຳລັງສູນເສຍຄວາມອຸດົມສົມບູນດັ່ງກ່າວ ຈາກການຕັດໄມ້ທຳລາຍປ່າ. ປ່າໄມ້ ແລະ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນໄດ້ຖືກຄຸກຄາມຢ່າງຕໍ່ເນື່ອງ ຈາກກິດຈະກຳທາງດ້ານກະສິກຳ, ການພັດທະນາພື້ນຖານໂຄງລ່າງ ແລະ ລວມໄປເຖິງການຄ້າຂາຍສັດປ່າທີ່ຜິດກົດໝາຍ.

80% ຂອງຈຳນວນປະຊາກອນ ໂດຍສະເພາະແມ່ຍິງ ແມ່ນເພິ່ງພາອາໄສລະບົບນິເວດ ຂອງປ່າໄມ້ທີ່ມີຄວາມຫຼາກຫຼາຍ ທາງດ້ານຊີວະນາໆພັນ ແລະຄຸນປະໂຫຍດຕ່າງໆ ແລະ ໄດ້ຮັບຜົນກະທົບໂດຍກົງຈາກການປ່ຽນແປງດິນຟ້າອາກາດ.

ລັດຖະບານ ສປປ ລາວ ໄດ້ເຫັນເຖິງຄວາມສຳຄັນຂອງປ່າໄມ້, ດັ່ງນັ້ນຈຶ່ງໃຫ້ຄຳໝັ້ນສັນຍາ ໃນການເພີ່ມພື້ນທີ່ການປົກຫຸ້ມຂອງປ່າໄມ້ໃນທົ່ວປະເທດໃຫ້ເປັນ 70% ແລະ ສະເໜີ ອຸທິຍານແຫ່ງຊາດ ຫີນໜາມໜໍ່ ເຂົ້າເປັນມໍລະດົກໂລກທາງທຳມະຊາດ.

ນອກຈາກນັ້ນ, ລັດຖະບານ ສປປ ລາວ ຍັງໄດ້ຈັດຕັ້ງ ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ເພື່ອອະນຸຍາດໃຫ້ມີການຄ້າໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ສົ່ງເສີມການຄຸ້ມຄອງປ່າໄມ້ທີ່ດີ.

## ຈຸດປະສົງ

ພວກເຮົາເຮັດວຽກຮ່ວມກັບຄູ່ຮ່ວມງານມາກຫຼາຍພາກສ່ວນ ເພື່ອປັບປຸງ ແລະ ກຳນົດເງື່ອນໄຂກອບວຽກງານທີ່ດີຂຶ້ນ ເພື່ອການນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ ແລະ ການປົກປັກຮັກສາຊີວະນາໆພັນໃນລາວ.



ຂະບວນການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ, ແລະ ການຄ້າໄມ້ ແມ່ນ ວິທີການການແກ້ໄຂ ເພື່ອຫລຸດຜ່ອນ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ແລະ ຕິດຕາມໄມ້.
*ຮູບໂດຍ: © GIZ/ບາດ ເວີເວຈ໌*

| | |
|---|---|
| **ຊື່ໂຄງການ** | ໂຄງການ ການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ ແບບຍືນຍົງ (ProFEB) |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) |
| **ເຂດເປົ້າໝາຍຂອງໂຄງການ** | ແຂວງຄຳມ່ວນ, ອັດຕະປື ແລະ ນະຄອນຫຼວງວຽງຈັນ |
| **ຄູ່ຮ່ວມງານໂຄງການ** | ກະຊວງກະສິກຳ ແລະ ປ່າໄມ້ |
| **ໄລຍະເວລາໂຄງການ** | ພຶດສະພາ 2021 - ມິຖຸນາ 2024 |

## ວິທີດຳເນີນວຽກງານ

ໂຄງການໄດ້ຮ່ວມມືຢ່າງໃກ້ຊິດ ກັບຄູ່ຮ່ວມງານ ໃນການດຳເນີນກິດຈະກຳເພື່ອການນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ ແລະ ການປົກປັກຮັກສາຊີວະນາໆພັນ ດັ່ງລຸ່ມນີ້:

- ກຳນົດເງື່ອນໄຂກອບວຽກງານທີ່ດີຂຶ້ນສຳລັບການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ, ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ (Lao-EU FLEGT-VPA).
- ເສີມສ້າງຂີດຄວາມສາມາດ ໃນການສະເໜີ ອຸທິຍານແຫ່ງຊາດ ຫີນໜາມໜໍ່ ເພື່ອເຂົ້າເປັນມໍລະດົກທາງທຳມະຊາດ ຮ່ວມຊາຍແດນ ກັບມໍລະດົກໂລກທາງທຳມະຊາດ "ອຸທິຍານແຫ່ງຊາດ ຟອງຍ່າເກບາງ ຂອງ ສສ ຫວຽດນາມ" ໂດຍການຮ່ວມມືກັບເຈົ້າໜ້າທີ່ຫວຽດນາມ.
- ສະໜັບສະໜູນ ການສ້າງຕັ້ງໜ່ວຍງານສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມ ລາວ (EEAL) ແລະ ພັດທະນາຄວາມອາດສາມາດທີ່ຈຳເປັນໃຫ້ແກ່ສະມາຊິກ ຂອງໜ່ວຍງານ ສຳລັບການດຳເນີນວຽກງານ ດ້ານການສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມທີ່ມີປະສິດທິພາບ.
- ສະໜັບສະໜູນການຮ່ວມມື ລະຫວ່າງບັນດາ ຄູ່ຮ່ວມງານພາກລັດ, ຜູ້ໃຫ້ທຶນ ແລະ ປະຊາຊົນທ້ອງຖິ່ນ ເພື່ອຕ້ານການຄ້າຂາຍສັດປ່າທີ່ຜິດກົດໝາຍໃນ ສປປ ລາວ ຢ່າງມີປະສິດທິພາບ.

## ສິ່ງທີ່ພວກເຮົາບັນລຸ

ແຜນງານການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ແມ່ນມີຄວາມຄືບໜ້າເປັນຢ່າງດີ. ໂຄງສ້າງການຮ່ວມມື ລະຫວ່າງ ບັນດາກະຊວງທີ່ກ່ຽວຂ້ອງ ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອນຳໃຊ້ສຳລັບຂະບວນຊີ້ນຳແບບມີສ່ວນຮ່ວມ. ພາກສ່ວນເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ມີສ່ວນຮ່ວມຢ່າງຫ້າວຫັນໂດຍໄດ້ຮັບການອຳນວຍຄວາມສະດວກຈາກ ໜ່ວຍງານທາງພາກລັດ. ໄດ້ມີຄວາມຄືບໜ້າເປັນທີ່ໜ້າພໍໃຈ ກ່ຽວກັບບັນດາເງື່ອນໄຂດ້ານກົດໝາຍຂັ້ນເບື້ອງຕົ້ນ ເຊັ່ນ: ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ຖືເປັນໝາກຜົນທີ່ສຳຄັນ ຂອງວຽກງານດັ່ງກ່າວ.

ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ໄດ້ຖືກຍົກລະດັບເປັນ ອຸທິຍານແຫ່ງຊາດ ຫີນໜາມໜໍ່. ການສະເໜີ ອຸທິຍານແຫ່ງຊາດເຂົ້າເປັນມໍລະດົກໂລກທາງທຳມະຊາດຮ່ວມຊາຍແດນກັບ ອຸທິຍານແຫ່ງຊາດ ຟອງຢ່າແກບາງ ຂອງ ສສ ຫວຽດນາມ ແມ່ນດຳເນີນໄປດ້ວຍດີ.

ສາມາດສຳເລັດການສຶກສາຂັ້ນພື້ນຖານທີ່ຈຳເປັນທັງໝົດ ແລະ ສຳເລັດເອກະສານພາກວິຊາການ ໃນການສະເໜີເຂົ້າເປັນມໍລະດົກໂລກ. ການພັດທະນາກອບວຽກການຄຸ້ມຄອງຮ່ວມຊາຍແດນ ສຳລັບ ອຸທິຍານທັງສອງແຫ່ງ ແມ່ນມີຄວາມຄືບໜ້າ ແລະ ພວມຢູ່ໃນຂະບວນການປຶກສາຫາລືລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ. ເພື່ອຍົກລະດັບການຄຸ້ມຄອງມໍລະດົກໂລກໃນອະນາຄົດຂອງລາວ ຂຶ້ນສູ່ລະດັບສາກົນ, ສປປ ລາວ ໄດ້ລິເລີ່ມການຂຶ້ນທະບຽນບັນຊີລາຍຊື່ສີຂຽວ ຂອງ ອຸທິຍານແຫ່ງຊາດ ຫີນໜາມໜໍ່, ໂດຍອີງໃສ່ແບບແຜນການຄຸ້ມຄອງຮ່ວມ ທີ່ໄດ້ຮັບຜົນສຳເລັດ ຢູ່ຫີນໜາມໜໍ່ ນັບແຕ່ປີ 2014 ເປັນຕົ້ນມາ.

ຜ່ານການນຳສະເໜີໂຄງສ້າງ ແລະ ຂະບວນການສື່ສານດ້ານສິ່ງແວດລ້ອມຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ຄຽງຄູ່ກັບ ການຮ່ວມມືປະສານງານກັບຄູ່ຮ່ວມງານຈາກຫຼາຍພາກສ່ວນ, ໂຄງການ ProFEB ໄດ້ປັບປຸງການນຳສະເໜີຂໍ້ມູນ ກ່ຽວກັບບັນຫາສິ່ງແວດລ້ອມຕ່າງໆ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ຍຸດທະສາດການສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (NSECEA).



*ຜາຫີນປູນທີ່ສູງຊັນຫລາຍຮ້ອຍແມັດ ຫລາຍແຫ່ງ ເປັນລັກສະນະທີ່ໂດດເດັ່ນທາງດ້ານພູມສັນຖານ ຂອງອຸທິຍານແຫ່ງຊາດ ຫີນໜາມໜໍ່.*
*ຮູບຖ່າຍ: © ໄຣອັນ ເດີບູທ໌*

ການຮ່ວມມືກັນ ລະຫວ່າງ ພາກລັດ, ອົງການຈັດຕັ້ງທາງສັງຄົມ ແລະ ສະຖາບັນການສຶກສາໃນທ້ອງຖິ່ນ ແມ່ນຖືເປັນຕົວຢ່າງທີ່ດີ ໃນການຈັດຕັ້ງປະຕິບັດວຽກງານການສຶກສາດ້ານສິ່ງແວດລ້ອມ.

## ບົດບາດຍິງ-ຊາຍ ແລະ ຊັບພະຍາກອນທຳມະຊາດ

ໂຄງການ ຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ ເຂົ້າໃນທຸກກິດຈະກຳຂອງໂຄງການ ແລະ ເກັບກຳຂໍ້ມູນຂອງຜູ້ເຂົ້າຮ່ວມ (ຍິງ/ຊາຍ) ຕາມຄວາມເປັນໄປໄດ້.

ລະບົບການຄຸ້ມຄອງແບບມີສ່ວນຮ່ວມ ຂອງອຸທິຍານແຫ່ງຊາດ ຫີນໜາມໜໍ່ ໄດ້ຊຸກຍູ້ການມີສ່ວນຮ່ວມຂອງແມ່ຍິງໃນທຸກລະດັບ ແລະ ທຸກດ້ານໃນການດຳລົງຊີວິດ. ໃນນີ້ ບໍ່ພຽງແຕ່ສົ່ງເສີມແມ່ຍິງໂດຍທົ່ວໄປ ແຕ່ຍັງລວມເຖິງການສົ່ງເສີມແມ່ຍິງຈາກຊົນເຜົ່າກຸ່ມນ້ອຍ ໂດຍສະເພາະ ໃນການສ້າງຄວາມສົມດຸນ ດ້ານບົດບາດ ຍິງ-ຊາຍ ໃນອົງການຈັດຕັ້ງ, ແລະ ການປົກປ້ອງສິດທີ່ຈະໄດ້ຮັບໂອກາດ ໃນການສ້າງລາຍຮັບ ແລະ ການເຂົ້າເຖິງຊັບພະຍາກອນທຳມະຊາດ.

ໃນແຜນງານ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ ແບບສະໝັກໃຈ (VPA) ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ, ສ່ວນໃຫຍ່ແລ້ວ ຢູ່ໃນລະດັບການຕັດສິນໃຈ ແມ່ນມີຜູ້ຊາຍເປັນຫຼັກ. ດັ່ງນັ້ນ ໂຄງການ ProFEB ຈຶ່ງມີຈຸດປະສົງ ເພື່ອສົ່ງເສີມຄວາມສຳຄັນຂອງ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງແມ່ຍິງ ເຂົ້າໃນກອງປະຊຸມໃຫ້ຫຼາຍຂຶ້ນ.

ເຄື່ອງມືປະເພດ: ໂປສເຕີ, ເກມ ຫຼື ປຶ້ມກາຕູນ ທີ່ອອກແບບ, ຜະລິດ ແລະ ສະໜັບສະໜູນ ໂດຍໂຄງການ ProFEB ແມ່ນ ລ້ວນແລ້ວແຕ່ອີງໃສ່ບົດບາດ ຍິງ-ຊາຍ ໃນການສົ່ງເສີມການສ້າງຈິດສຳນຶກ ດ້ານສິ່ງແວດລ້ອມ, ໃຫ້ແທດເໝາະກັບຄວາມຕ້ອງການ ຂອງປະຊາຊົນໃນບັນດາເມືອງ ແລະ ແຂວງເປົ້າໝາຍຂອງໂຄງການ ແລະ ໃຫ້ແທດເຫມາະກັບກຸ່ມທີ່ມີຄວາມສ່ຽງ ໂດຍສະເພາະແມ່ຍິງຊົນເຜົ່າທີ່ບໍ່ຮູ້ໜັງສື.

### ກ່ຽວກັບ GIZ ລາວ

GIZ ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານ ຢູ່ ສປປ ລາວ ຕັ້ງແຕ່ປີ 1993 ແລະ ປັດຈຸບັນ ກຳລັງສະໜັບສະໜູນບັນດາໂຄງການ ໃນ 2 ຂົງເຂດບູລິມະສິດຄື: ກ) ການພັດທະນາເສດຖະກິດແບບຍືນຍົງ ແລະ ຂ) ການພັດທະນາຊົນນະບົດໃນຂົງເຂດທີ່ທຸກຍາກ. ນອກຈາກນັ້ນ, ພວກເຮົາຍັງຈັດຕັ້ງປະຕິບັດໂຄງການກ່ຽວກັບການປົກຄອງທີ່ດີ ແລະ ເຂົ້າຮ່ວມໃນໂຄງການລະດັບພາກພື້ນ ເຊັ່ນວ່າ ຮ່ວມກັບ ຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ອາຊຽນ.

ກະລຸນາເຂົ້າເບິ່ງເວັບໄຊທ໌ຂອງພວກເຮົາ www.giz.de/laos (EN); www.giz.de/laos-la (LA) ສຳລັບຂໍ້ມູນ ເພີ່ມເຕີມ ກ່ຽວກັບວຽກງານຂອງ GIZ ໃນປະເທດລາວ ແລະ ທົ່ວໂລກ.


| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für<br>Internationale Zusammenarbeit (GIZ) GmbH<br>ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ<br>ໂຄງການ ການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ ແບບຍືນຍົງ (ProFEB)<br>ກົມກວດກາປ່າໄມ້, ວິທະຍາເຂດ ທາດດຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ<br>ໂທ: +856 21 255 564<br>ແຟັກ: +856 21 255 263<br>www.giz.de/laos (EN); www.giz.de/laos-la (LA) |
| ລົງວັນທີ | ຕຸລາ 2021 |
| ອອກແບບໂດຍ | ພະແນກປະຊາສຳພັນ ຫ້ອງການ GIZ ປະຈຳລາວ, ນະຄອນຫຼວງວຽງຈັນ |
| ຮູບຖ່າຍໂດຍ | ບາດ ເວີເວຈ໌: ໜ້າທີ 1<br>ໄຣອັນ ເດີບູທ໌: ໜ້າທີ 2 |
| ຂຽນໂດຍ | ມາທິນ ໂນວັກ, ມະນີເພັດ ຈຸນລະມະນີ |
| ບຸກຄົນຕິດຕໍ່ | ມາທິນ ໂນວັກ<br>(martin.nowack@giz.de) |

GIZ ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ

| | |
|---|---|
| ໃນນາມຂອງ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ) |